ເອກະສານຂໍ້ມູນໂຄງການສະບັບແປເປັນພາສາລາວນີ້ແມ່ນອີງຕາມສະບັບພາສາອັງກິດວັນທີ 19 ມິຖຸນາ 2015.

ADB

# ເອກະສານຂໍ້ມູນໂຄງການ

ເອກະສານຂໍ້ມູນໂຄງການແມ່ນໄດ້ປະກອບດ້ວຍຂໍ້ມູນກ່ຽວກັບໂຄງການ ຫລື ແຜນງານຕ່າງໆ: ເນື່ອງຈາກວ່າໂຄງການດັ່ງກ່າວນີ້ແມ່ນພວມໄດ້ຮັບການຈັດຕັ້ງປະຕິບັດຢູ່. ດັ່ງນັ້ນ, ມີບາງຂໍ້ມູນອາດຈະບໍ່ໄດ້ລວມໄວ້ຢູ່ໃນເອກະສານສະບັບເລີ້ມຕົ້ນນີ້ ແຕ່ຂໍ້ມູນເພີ່ມເຕີມຈະໄດ້ຖືກຕື່ມໃສ່ເອກະສານຂໍ້ມູນໂຄງການດັ່ງກ່າວພາຍຫຼັງທີ່ມີຂໍ້ມູນເພີ່ມເຕີມ. ຂໍ້ມູນກ່ຽວກັບບັນດາໂຄງການທີ່ໄດ້ຖືກນຳສະ ເໜີແມ່ນກຳລັງຖືກພິຈາລະນາ ແລະ ປະກອບຄຳເຫັນຢູ່.

| | |
|---|---|
| **ວັນທີສ້າງເອກະສານຂໍ້ມູນໂຄງການ** | – |
| **ເອກະສານຂໍ້ມູນໂຄງການໄດ້ຮັບການປັບປຸງໃນວັນທີ** | 30 ມີນາ 15 |

| | |
|---|---|
| **ຊື່ໂຄງການ** | ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໃນອະນຸພາກພື້ນແມ່ນ້ຳຂອງ |
| **ປະເທດ** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **ເລກທີໂຄງການ/ແຜນງານ** | 46293-003 |
| **ສະຖານະພາບ** | ອະນຸມັດແລ້ວ |
| **ສະພາບທີ່ຕັ້ງທາງພູມສາດ** | – |

ໃນການກະກຽມແຜນງານ ຫລື ຍຸດທະສາດຢູ່ໃນປະເທດໃດໜຶ່ງ, ການສະໜອງທຶນໃຫ້ແກ່ໂຄງການໃດໜຶ່ງ, ຫລືການກຳໜົດເອີ້, ຫລືການອ້າງອີງເຖິງ, ເຂດແດນສະເພາະ ຫລືທີ່ຕັ້ງພູມສັນຖານໃດໜຶ່ງທີ່ໄດ້ລະບຸໃນເອກະສານສະບັບນີ້, ທະນາຄານພັດທະນາອາຊີ ບໍ່ໄດ້ມີເຈດຕະນາກໍ່ໃຫ້ເກີດການປ່ຽນແປງທາງດ້ານກົດໝາຍ ຫລື ຕໍ່ສະຖານະພາບຂອງເຂດແຄ້ວນຫລືພື້ນທີ່ໃດໆທັງນັ້ນ.

| | |
|---|---|
| **ຂະແໜງການ** | ຂະແໜງອຸດສະຫະກຳ ແລະ ການຄ້າ<br>ຂະແໜງຂົນສົ່ງ |
| **ຂະແໜງການຍ່ອຍ** | ການພັດທະນາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ<br>ການຄ້າ ແລະ ການບໍລິການ<br>ການຂົນສົ່ງທາງບົກ (ນອກເຂດເທດສະບານ) |
| **ວາລະຍຸດທະສາດ** | ການຂະຫຍາຍຕົວແບບຍືນຍົງທາງດ້ານສິ່ງແວດລ້ອມ.<br>ການຂະຫຍາຍຕົວທາງເສດຖະກິດເພື່ອຜົນປະໂຫຍດໂດຍລວມ.<br>ການເຊື່ອມໂຍງກັນໃນພາກພື້ນ. |
| **ສິ່ງຊຸກຍູ້ການປ່ຽນແປງ** | ການເຊື່ອມສານແລະການສົ່ງເສີມວຽກງານບົດບາດຍິງ-ຊາຍ<br>ການພັດທະນາບໍລິຫານປົກຄອງແລະຄວາມສາມາດ<br>ການແກ້ໄຂດ້ວຍຄວາມຮູ້<br>ການຮ່ວມມື |
| **ໝວດເຊື່ອມສານແລະສົ່ງເສີມບົດບາດຍິງຊາຍ** | ໝວດທີ 2: ການເຊື່ອມສານວຽກງານບົດບາດຍິງ-ຊາຍຢ່າງມີປະສິດທິພາບ. |

## ການສະໜອງທຶນ

| ປະເພດ/<br>ຮູບແບບການຊ່ວຍເຫລືອ | ອະນຸມັດເລກທີ | ແຫລ່ງທຶນ | ຈຳນວນມູນຄ່າອະນຸມັດ (ພັນ) |
|---|---|---|---|
| ເງິນກູ້ຢືມ | 3156 | ກອງທຶນພັດທະນາອາຊີ | 40.000 |
| – | – | ຄູ່ຮ່ວມງານ | 3.570 |
| ລວມທັງໝົດ | | | US$ 43.570 |

## ປະເພດຂອງການປົກປ້ອງ

ຂໍ້ມູນເພີ່ມເຕີມ ກ່ຽວກັບ ລະດັບໝວດຂອງການປົກປ້ອງກະລຸນາເບິ່ງໃນເວັບໄຊ້
http://www.adb.org/site/safeguards/safeguard-categories

| | |
|---|---|
| ດ້ານສິ່ງແວດລ້ອມ | B |
| ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ | B |
| ຄົນທ້ອງຖິ່ນ | B |

## ສະຫລຸບບັນຫາດ້ານສັງຄົມ ແລະ ສິ່ງແວດລ້ອມ

ດ້ານສິ່ງແວດລ້ອມ

–

ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ

–

ຄົນທ້ອງຖິ່ນ

–

## ການສື່ສານ, ການມີສ່ວນຮ່ວມ ແລະ ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ

ໃນໄລຍະອອກແບບໂຄງການ

–

ໃນໄລຍະຈັດຕັ້ງປະຕິບັດໂຄງການ

–

## ລາຍລະອຽດໂຄງການ

ໂຄງການດັ່ງກ່າວຈະຊ່ວຍແກ້ໄຂຂໍ້ຈຳກັດທີ່ເປັນອຸປະສັກທາງດ້ານພື້ນຖານໂຄງລ່າງ ແລະ ຄວາມອາດສາມາດຕ່າງໆທີ່ຂັດຂວາງການພັດທະນາການທ່ອງທ່ຽວໃນສີ່ແຂວງເຊັ່ນ: ຈຳປາສັກ, ຄຳມ່ວນ, ຫຼວງພະບາງ ແລະ ອຸດົມໄຊ ເຊິ່ງບັນດາແຂວງດັ່ງກ່າວເປັນເຂດທີ່ຕັ້ງຂອງແລວທາງເສດຖະກິດຕອນກາງຂອງອະນຸພາກພື້ນແມ່ນ້ຳຂອງ. ໂຄງການຍັງຈະໄດ້ປະກອບສ່ວນໃນການສ້າງວຽກເຮັດງານທຳທີ່ຕິດພັນກັບການທ່ອງທ່ຽວປະມານ 27.000 ອັດຕາໃນ ສປປ ລາວ ໂດຍ: (i) ການປູຢາງທາງຊົນນະບົດ 70 ກິໂລແມັດ (ກມ) ເພື່ອເປີດພື້ນທີ່ໃໝ່ໃຫ້ແກ່ການລົງທຶນຂອງເອກະຊົນໃສ່ການທ່ອງທ່ຽວ ແລະ ເພື່ອປັບປຸງຊ່ອງທາງອອກໄປຫາຕະຫຼາດ ແລະ ການບໍລິການດ້ານສັງຄົມຕ່າງໆໃຫ້ແກ່ປະຊາຊົນ 15.000 ຄົນ; (ii) ປັງປຸງສະພາບແວດລ້ອມເພື່ອສະດວກໃຫ້ແກ່ທຸລະກິດການໃຫ້ບໍລິການຕ່າງໆໃນບັນດາເຂດພື້ນທີ່ ທີ່ມີຄວາມສຳຄັນຕໍ່ການທ່ອງທ່ຽວຂ້າມຊາຍແດນ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ສົ່ງຜົນກະທົບຕໍ່ສາທາລະນະສຸກຂອງຊຸມຊົນສຳລັບຜູ້ຢູ່ອາໄສ 35.000 ຄົນ ແລະ ສຳລັບ ນັກທ່ອງທ່ຽວ 2,4 ລ້ານຄົນຕໍ່ປີ ຊຶ່ງຈະເລີ່ມຈາກປີ 2019 ເປັນຕົ້ນໄປ; ແລະ (iii) ອຳນວຍຄວາມສະດວກໃຫ້ບໍລິການຊ່ວຍເຫຼືອການດາເນີນທຸລະກິດ ສຳລັບວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍຢ່າງໜ້ອຍ 500 ຫົວໜ່ວຍ. ໂຄງການຍັງຈະເພີ່ມທະວີການຮ່ວມມື ແລະ ເຊື່ອມໂຍງໃນພາກພື້ນໂດຍການຈັດຕັ້ງປະຕິບັດບັນດາມາດຕະຖານດ້ານການທ່ອງທ່ຽວຂັ້ນພາກພື້ນ, ສົ່ງເສີມການທ່ອງທ່ຽວແບບເປັນວົງຈອນທີ່ເຊື່ອມຕໍ່ກັນກັບຫຼາຍປະເທດ, ແລະ ສະໜັບສະໜູນໃຫ້ມີການເຈລະຈາດ້ານນະໂຍບາຍຢ່າງເປັນຮູບແບບ ເພື່ອຫຼຸດຜ່ອນບັນຫາທີ່ເປັນອຸປະສັກແລະສິ່ງຂັດຂວາງຕ່າງໆຕໍ່ກັບການທ່ອງທ່ຽວ. ແຜນລົງທຶນຂອງໂຄງການດັ່ງກ່າວນີ້ແມ່ນສອດຄ່ອງກັບແຜນຍຸດທະສາດຂະແໜງການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ແລະ ແຜນຍຸດທະສາດການທ່ອງທ່ຽວແຫ່ງຊາດຂອງລັດຖະບານແຕ່ປີ 2012 - 2020.

## ເຫດຜົນອ້າງອີງຂອງໂຄງການ ແລະ ການເຊື່ອມໂຍງເຂົ້າໃນຍຸດທະສາດແຫ່ງຊາດ/ພາກພື້ນ

ການໃນພາກພື້ນ. ໃນບັນດາກຸ່ມປະເທດໃນອາຊີແລະປາຊີຟິກ, ເຂດອານຸພາກພື້ນແມ່ນ້ຳຂອງມີຈຸດດີທີ່ພົ້ນເດັ່ນໃນດ້ານການທ່ອງທ່ຽວອັນເປັນຜົນມາຈາກຊັບສິນທາງວັດທະນາທຳແລະທຳມະຊາດທີ່ຫຼາກຫຼາຍ, ການເຊື່ອມຈອດດ້ານການຂົນສົ່ງກັບສາກົນເຊັ່ນທາງບົກ ແລະ ທາງອາກາດທີ່ສະດວກດີລະຫວ່າງບັນດາປາຍທາງຕ່າງໆ, ແລະ ຄວາມຕ້ອງການໃນການທ່ອງທ່ຽວເພື່ອຄວາມມ່ວນຊື່ນພາຍໃນພາກພື້ນທີ່ມີເພີ່ມຂຶ້ນ. ນັກທ່ອງທ່ຽວສາກົນທີ່ເຂົ້າມາທ່ອງທ່ຽວໃນພາກພື້ນມີຈຳນວນເພີ້ມຂຶ້ນ 12,4% ຕໍ່ປີ; ໃນປີ 2012, ມີຈຳນວນນັກທ່ອງທ່ຽວ 44,8 ລ້ານຄົນທີ່ໄດ້ເຂົ້າມາທ່ອງທ່ຽວໃນພາກພື້ນດັ່ງກ່າວ ຊຶ່ງເປັນຕົວເລກທີ່ບັນລຸໄດ້ສູງເປັນປະຫວັດການ, ແລະ ສ້າງລາຍຮັບຈາກການທ່ອງທ່ຽວໄດ້ມູນຄ່າ 44,3 ຕື້ໂດລາ. ຂະແໜງການທ່ອງທ່ຽວສ້າງວຽກເຮັດງານທຳໄດ້ 7 ລ້ານອັດຕາ ແລະ ສ້າງໄດ້ຜົນປະໂຫຍດທາງດ້ານເສດຖະກິດໃຫ້ຂະແໜງການບໍລິການ ແລະ ຂະແໜງການຜະລິດອື່ນໆ. ໃນແຕ່ລະປີ, ປະມານໜຶ່ງໃນສາມຂອງນັກທ່ອງທ່ຽວສາກົນທີ່ເດີນທາງເຂົ້າມາໃນເຂດອານຸພາກພື້ນແມ່ນ້ຳຂອງນັ້ນຈະເດີນທາງທ່ອງທ່ຽວໄປຢ່າງນ້ອຍ 2 ປະເທດ ໃນຂະນະທີ່ມີປະຊາຊົນຫຼາຍລ້ານຄົນເດີນທາງຂ້າມຊາຍແດນໄປກັບໃນມື້ດຽວ. ບັນດາປະເທດອະນຸພາກພື້ນແມ່ນ້ຳຂອງມີຄວາມກະຕືລືລົ້ນທີ່ຈະເພີ່ມທະວີການຮ່ວມມືກັນດ້ານການທ່ອງທ່ຽວໃນອະນຸພາກພື້ນ ແລະ ໃນຫວ່າງບໍ່ດົນມານີ້ບັນດາປະເທດດັ່ງກ່າວກໍ່ໄດ້ຢືນຢັນຄວາມມຸ່ງໝັ້ນຂອງຕົນ ເພື່ອສົ່ງເສີມການທ່ອງທ່ຽວຂ້າມຊາຍແດນພາຍໃຕ້ຂອບຍຸດທະສາດແຜນງານການຮ່ວມມືດ້ານເສດຖະກິດໃນອະນຸພາກພື້ນແມ່ນ້ຳຂອງສຳລັບ ປີ 2012 - 2022. ແຕ່ຢ່າງໃດກໍ່ຕາມ, ການລົງທຶນໃສ່ສາທາລະນຸປະໂພກດ້ານການທ່ອງທ່ຽວ ຕະຫລອດຮອດການເປີດປະຕູສູ່ບັນດາແຫຼ່ງທ່ອງທ່ຽວໃນບັນດາປະເທດທາງຜ່ານທີ່ສຳຄັນຕ່າງໆທີ່ຍັງບໍ່ທັນພຽງພໍກໍ່ຍັງຄົງເປັນອຸປະສັກຂັດຂວາງຕົ້ນຕໍຕໍ່ການຂະຫຍາຍຕົວຂອງທຸລະກິດດ້ານການທ່ອງທ່ຽວຂອງພາກເອກະຊົນ ພ້ອມທັງຈຳກັດເຮັດໃຫ້ຜົນປະໂຫຍດທີ່ເກີດຈາກການຂະຫຍາຍຕົວຂອງຂະແໜງການທ່ອງທ່ຽວເຂົ້າບໍ່ເຖິງເຂດທີ່ມີການພັດທະນາໜ້ອຍ. ບັນດາບູລິມະສິດແຫ່ງຊາດ. ສປປ ລາວ ໄດ້ຮັບນັກທ່ອງທ່ຽວສາກົນ 3,33 ລ້ານຄົນໃນປີ 2012 ເຊິ່ງເພີ້ມຂຶ້ນ 22% ເມື່ອທຽບກັບປີ 2011 ແຕ່ມີອັດຕາສ່ວນໜ້ອຍກວ່າ 8% ຂອງນັກທ່ອງທ່ຽວທີ່ເຂົ້າມາໃນຂົງເຂດອະນຸພາກພື້ນແມ່ນ້ຳຂອງ. ການເດີນທາງ ແລະ ທ່ອງທ່ຽວປະກອບສ່ວນ 5,3% ຂອງລວມຍອດຜະລິດຕະພັນພາຍໃນ ແລະ ສ້າງວຽກເຮັດໄດ້ 134.000 ອັດຕາ ເຊິ່ງເທົ່າກັບ 4,5% ຂອງການຈ້າງງານລວມທັງໝົດ. ແຜນຍຸດທະສາດການທ່ອງທ່ຽວແຫ່ງຊາດຂອງລັດຖະບານລາວແມ່ນສອດຄ່ອງກັບແຜນຍຸດທະສາດຂະແໜງການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ເຊິ່ງໃຫ້ບູລິມະສິດແກ່ດ້ານການຂົນສົ່ງ ແລະ ຍົກລະດັບໂຄງລ່າງພື້ນຖານໃນຂົງເຂດເທດສະບານ, ການສຶກສາ ແລະ ການຝຶກອົບຮົມ, ພ້ອມທັງການສົ່ງເສີມນະໂຍບາຍເພື່ອປັບປຸງແວດລ້ອມທີ່ເອື້ອອຳນວຍຕໍ່ການດຳເນີນທຸລະກິດ. ກົດໝາຍວ່າດ້ວຍການທ່ອງທ່ຽວສະບັບປີ 2005 ໄດ້ກຳນົດພື້ນຖານດ້ານ

ນິຕິກໍາສໍາລັບຍຸດທະສາດດັ່ງກ່າວ, ພ້ອມທັງໄດ້ກໍານົດປັດໄຈຕ່າງໆເພື່ອ ການສ້າງອຸດສາຫະກໍາການທ່ອງທ່ຽວແບບຍືນຍົງເພື່ອປະກອບສ່ວນໃຫ້ແກ່ການພັດທະນາປະເທດແລະການຮ່ວມມືກັບສາກົນໄດ້ຮັບການເສີມຂະຫຍາຍ. ຈຸດປະສົງຍຸດທະສາດແມ່ນແນໃສ່ (i) ສ້າງວຽກເຮັດງານທາ ແລະ ສ້າງລາຍຮັບໃຫ້ປະຊາຊົນທ້ອງຖິ່ນ, (ii) ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງບໍລິຫານປາຍທາງຂອງການທ່ອງທ່ຽວ, (iii) ຂະຫຍາຍການຮ່ວມມືດ້ານການທ່ອງທ່ຽວ ລະຫວ່າງລັດກັບເອກະຊົນ, ແລະ (iv) ສ້າງ ຄວາມຫຼາກຫຼາຍໃນທາງດ້ານຜະລິດຕະພັນ ແລະ ການໃຫ້ບໍລິການດ້ານການທ່ອງທ່ຽວ. ມູນຄ່າຂອງໂຄງການລົງທຶນຂອງລັດຖະບານ ສໍາລັບ ຂະແໜງການທ່ອງທ່ຽວແຕ່ປີ 2011 ເຖິງປີ 2015 ແມ່ນຄາດວ່າມີປະມານ 118 ລ້ານໂດລາ. ບັນຫາຕົ້ນຕໍ. ເຖິງແມ່ນວ່າ ສປປລາວ ມີສະຖານທີ່ທ່ອງທ່ຽວທາງວັດທະນະທໍາ ແລະ ທາງທໍາມະຊາດຫຼາຍແຫ່ງທີ່ສາມາດດຶງດູດນັກທ່ອງທ່ຽວ ແລະ ມີທ່າແຮງສູງໃນການພັດທະນາການທ່ອງທ່ຽວກໍ່ຕາມ, ແຕ່ວ່າການທ່ອງທ່ຽວແມ່ນມຸ່ງໃສ່ແຕ່ຢູ່ໃນເຂດນະຄອນຫຼວງວຽງຈັນເປັນສ່ວນໃຫຍ່ ຊຶ່ງມີຈໍານວນນັກທ່ອງທ່ຽວກວມເອົາ 43% ຂອງຈໍານວນນັກທ່ອງທ່ຽວສາກົນທີ່ເຂົ້າມາທ່ອງທ່ຽວທັງໝົດ ແລະ ກວມເອົາ 47% ຂອງການລົງທຶນກ່ຽວກັບ ການບໍລິການຕ່າງໆທີ່ຮອງຮັບນັກທ່ອງ. ເຖິງວ່າຈະມີແມ່ຍິງເຂົ້າປະກອບສ່ວນປະມານເຄິ່ງໜຶ່ງຂອງພະນັກງານທ່ອງທ່ຽວ, ແຕ່ສ່ວນຫຼາຍແມ່ນຖືກຈ້າງໃຫ້ເຮັດວຽກທີ່ໄດ້ໃຊ້ຄວາມຮູ້ໜ້ອຍ ແລະ ວຽກທີ່ໄດ້ຮັບຄ່າຈ້າງຕໍ່າ, ແລະ ມີຈໍານວນໜ້ອຍທີ່ໄດ້ຮັບໜ້າທີ່ຕໍາແໜ່ງລະດັບຂັ້ນນໍາໃນຂະແໜງການທ່ອງທ່ຽວ. ອຸປະສັກຂັດຂວາງຕົ້ນຕໍຕໍ່ການຂະຫຍາຍຕົວເພື່ອຜົນປະໂຫຍດໂດຍລວມໃຫ້ກະຈາຍເຖິງພື້ນທີ່ຕາມພູມສັນຖານຕ່າງໆໃຫ້ໄດ້ຫຼາຍຂຶ້ນກວ່າເກົ່ານັ້ນແມ່ນການຂາດເຂີນທາງດ້ານໂຄງລ່າງພື້ນຖານ, ດ້ານການຂົນສົ່ງທີ່ເຊື່ອມຈອດກັບບັນດາຈຸດໝາຍປາຍທາງທ່ອງທ່ຽວຕ່າງໆ; ການເຊື່ອມຈອດທາງດ້ານການຕະຫຼາດລະຫວ່າງຂະແໜງອຸດສາຫະກໍາການທ່ອງທ່ຽວ ແລະ ຂະແໜງເສດຖະກິດອື່ນໆຍັງບໍ່ເຂັ້ມແຂງ; ແລະ ຄວາມສາມາດຂັ້ນສະຖາບັນ ເພື່ອສົ່ງເສີມການພັດທະນາວິສາຫະກິດການທ່ອງທ່ຽວໃນຂັ້ນທ້ອງຖິ່ນແມ່ນຍັງມີຂີດຈໍາກັດ. ຍ້ອນແນວນັ້ນ, ນັກທ່ອງທ່ຽວທີ່ເຂົ້າມາຢ່າງໜ້ອຍ 40% ຈະອອກຈາກປະເທດໃນຮູບແບບຂອງການນໍາເຂົ້າທີ່ຕິດພັນກັບການທ່ອງທ່ຽວ. ໂຄງລ່າງພື້ນຖານດ້ານສິ່ງແວດລ້ອມທີ່ບໍ່ເໝາະສົມ ແລະ ມາດຕະ ຖານຕໍ່າໃນການໃຫ້ບໍລິການນັ້ນສົ່ງຜົນຕໍ່ໄລຍະພັກເຊົາ, ການໃຊ້-ຈ່າຍ ແລະ ຜົນໄດ້ຮັບຈາກນັກທ່ອງທ່ຽວຫຼຸດລົງ ເຊິ່ງເຮັດໃຫ້ລາຍຮັບສະເລ່ຍຕໍ່ນັກທ່ອງທ່ຽວໜຶ່ງຄົນທີ່ເຂົ້າມາທ່ຽວມີພຽງແຕ່ປະມານ 154 ໂດລາ ເຊິ່ງຕໍ່າທີ່ສຸດໃນຂົງເຂດອະນຸພາກພື້ນແມ່ນໍ້າຂອງ ແລະ ຕໍ່າກວ່າຂີດໝາຍ 1.390 ໂດລາ ໃນຂົງເຂດອາຊີ ແລະ ປາຊີຟິກ. ເພື່ອກໍາຈັດບັນດາອຸ ປະສັກເຫລົ່ານີ້ ແລະ ເພື່ອສ້າງຮູບແບບຂອງການພັດທະນາການທ່ອງທ່ຽວໃຫ້ເທົ່າທຽມກັນຫຼາຍຂຶ້ນກວ່າເກົ່າ, ໂຄງການນີ້ຈະຍົກລະດັບທາງເຊື່ອມຕິດ ລະຫວ່າງ ບັນດາສະຖານທີ່ທ່ອງທ່ຽວທີ່ດຶງດູດນັກທ່ອງທ່ຽວໃນເຂດຊົນນະບົດກັບສູນກາງເທດສະບານເມືອງຕ່າງໆ, ພ້ອມທັງປັບປຸງແວດລ້ອມເພື່ອອໍານວຍໃຫ້ແກ່ການບໍລິການທີ່ຮອງຮັບນັກທ່ອງທ່ຽວ ໃນເຂດທີ່ມີຄວາມສໍາຄັນແກ່ການທ່ອງທ່ຽວ, ແລະ ຊ່ວຍເຫຼືອດ້ານການຝຶກອົບຮົມ ແລະ ການສ້າງຄວາມສາມາດໃຫ້ບັນດາໜ່ວຍງານທີ່ຄູ້ມຄອງບໍລິຫານການນໍາທ່ຽວ ແລະ ບັນດາຜູ້ປະກອບການທຸລະກິດໃນທ້ອງຖິ່ນ. ການລົງທຶນຕ່າງໆຂອງໂຄງການນີ້ໄດ້ຖືກອອກແບບມາເພື່ອກະຕຸ້ນການລົງທຶນຂອງພາກເອກະຊົນເພີ້ມຕື່ມໃສ່ໂຄງສ້າງ ແລະ ການໃຫ້ບໍລິການດ້ານການທ່ອງທ່ຽວ, ພ້ອມທັງສົ່ງເສີມການໃຊ້-ຈ່າຍຂອງນັກທ່ອງທ່ຽວ ແລະ ສ້າງວຽກເຮັດງານທໍາທີ່ຕິດພັນກັບການທ່ອງທ່ຽວໃນເຂດທີ່ການພັດທະນາຍັງມີໜ້ອຍ, ແລະ ເພື່ອຮັບປະກັນວ່າ ການຂະຫຍາຍຕົວດ້ານການທ່ອງທ່ຽວມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ນະໂຍບາຍແລະຍຸດທະສາດທີ່ກ່ຽວຂ້ອງ. ໂຄງການນີ້ແມ່ນສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII ສໍາລັບ ປີ 2011-2015 ຂອງ ສປປ ລາວ ເຊິ່ງມີເປົ້າ ໝາຍເພື່ອສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດຢ່າງໝັ້ນຄົງ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຫລຸດຊ່ອງຫວ່າງຄວາມແຕກໂຕນກັນ. ຜົນໄດ້ຮັບຈາກໂຄງການນີ້ຈະປະກອບສ່ວນໃນການສ້າງຄວາມຫຼາກຫຼາຍທາງເສດຖະກິດ ແລະ ການພັດທະນາຊັບພະຍາກອນມະນຸດ, ແລະ ເພີ່ມທະວີການເຂົ້າປະກອບສ່ວນຂອງແມ່ຍິງ ແລະ ກຸ່ມຊົນເຜົ່າຕ່າງໆໃນການພັດທະນາປະເທດ. ເນັ້ນໜັກໃສ່ປັບປຸງການເຊື່ອມຈອດ ລະຫວ່າງ ເຂດເທດສະບານ ແລະ ເຂດຊົນນະ ບົດ, ການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າ ທີ່ເຊື່ອມຕໍ່ກັບຂະແໜງການທ່ອງທ່ຽວທີ່ພວມຂະຫຍາຍຕົວຢ່າງໄວວາໃຫ້ເຂັ້ມແຂງ, ແລະ ການສ້າງວຽກເຮັດງານທໍາ ສໍາລັບ ກໍາມະກອນທີ່ບໍ່ມີທັກສະ ແລະ ກໍາມະກອນທີ່ມີທັກສະ ບາງດ້ານແມ່ນລ້ອນແລ້ວແຕ່ສອດຄ່ອງກັບຈຸດປະສົງລວມຂອງຍຸດທະສາດການຮ່ວມພັດທະນາປະເທດ ສປປ ລາວ ຂອງ ເອດີບີ ສໍາລັບ 2012-2016 ທີ່ມີເປົ້າໝາຍເລັງໃສ່ການຂະຫຍາຍຕົວທາງເສດຖະກິດຢ່າງໝັ້ນຄົງ ແລະ ເພື່ອຜົນປະໂຫຍດຮ່ວມກັນຢ່າງທົ່ວເຖິງ ແລະ ການຫຼຸດຜ່ອນຄວາມທຸກຍາກ. ເຊິ່ງໂຄງການດັ່ງກ່າວນີ້ຈະຮັດແໜ້ນຄວາມພະຍາຍາມຂອງພາກພື້ນເພື່ອເພີ້ມການໄຫລວຽນຂອງເງິນລົງທຶນຂ້າມຊາຍແດນ ແລະ ເຮັດໃຫ້ບັນດາແລວທາງອະນຸພາກພື້ນແມ່ນໍ້າຂອງເປັນແລວທາງເສດຖະກິດ.. ການປະສານງານເພື່ອການພັດທະນາ. ຄະນະວິຊາການທ່ອງທ່ຽວປະຈໍາຂົງເຂດອານຸພາກພື້ນແມ່ນໍ້າຂອງແມ່ນເປັນຖານ ສໍາລັບ ການປະສານງານໃຫ້ຄວາມຊ່ວຍເຫຼືອຂະແໜງການທ່ອງທ່ຽວພາຍໃນພາກພື້ນນີ້. ວິຊາການອາວຸໂສດ້ານການທ່ອງທ່ຽວປະຈໍາອານຸພາກພື້ນແມ່ນໍ້າຂອງ ແລະ ເອດີບີ ຈະເປັນປະທານຮ່ວມໃນການຈັດກອງປະຊຸມຂອງຄະນະວິຊາການ ຊຶ່ງຈັດຂຶ້ນທຸກເຄິ່ງປີເພື່ອຊີ້ນໍາການຈັດຕັ້ງປະຕິບັດຍຸດທະສາດຂະແໜງການທ່ອງທ່ຽວ ໃນຂົງເຂດອານຸພາກພື້ນແມ່ນໍ້າຂອງພ້ອມທັງກໍານົດປະເດັນດ້ານນະໂຍບາຍເພື່ອການປະເມີນຜົນໃຫ້ແກ່ກອງປະຊຸມປະຈໍາປີຂອງລັດຖະມົນຕີທ່ອງທ່ຽວປະເທດສະມາຊິກອະນຸພາກພື້ນແມ່ນນໍ້າຂອງ ແລະ ກອງປະຊຸມສຸດ

ຍອດຜູ້ນຳປະເທດອະນຸພາກພື້ນແມ່ນ້ຳຂອງຊຶ່ງຈັດຂຶ້ນໃນທຸກໆ 3 ປີ. ໃນ ສປປ ລາວ, ການປະສານງານຂອງຂະແໜງການດັ່ງກ່າວ ແມ່ນຂຶ້ນກັບກະຊວງຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວ. ບັນດາຄູ່ຮ່ວມພັດທະນາອື່ນໆທີ່ເຂົ້າຮ່ວມໃນການພັດທະນາທ່ອງທ່ຽວມີຄືອົງການການຮ່ວມມືເພື່ອການພັດທະນາຂອງປະເທດເຢຍລະມັນ ໂດຍຜ່ານທາງອົງການ Deutsche Gesellschaft für Internationale Zusammenarbeit, ສູນການຄ້າສາກົນ, ອົງການຮ່ວມມືສາກົນແຫ່ງປະເທດຍີ່ປຸ່ນ, ອົງການພັດທະນາລຸກຊາບວກ (the Lux-Development), ແຜນງານການຊ່ວຍ ເຫຼືອຂອງປະເທດນິວຊີແລນ, ອົງການ Swisscontact, ກອງທຶນສັດປ່າໂລກ, ອົງການສະຫງວນສັດປ່າ. ສະມາຄົມທ່ອງທ່ຽວອາຊີ-ປາຊີຟິກ ແມ່ນເປັນກຸ່ມອຸດສາຫະກຳຊັ້ນນຳທີ່ມີສະມາຊິກຫຼາຍກວ່າ 1.100 ຄົນ ແລະ ມີສາຂາໃນ ສປປ ລາວ. ໃນໄລຍະຈັດຕັ້ງປະຕິບັດໂຄງການຈະໄດ້ມີການຄົ້ນຄ້ວາຊອກຫາແຫຼ່ງງົບປະມານລົງທຶນຄູ່ຂະໜານກັບໂຄງການດັ່ງກ່າວ. ບົດຮຽນຕ່າງໆ. ແຜນງານຊ່ວຍເຫຼືອຂະແໜງການທ່ອງທ່ຽວໃນຂົງເຂດອະນຸພາກພື້ນແມ່ນ້ຳຂອງຂອງເອດີບີ ແລະ ບັນດາໂຄງການທ່ອງທ່ຽວໃນ ສປປ ລາວທີ່ໄດ້ສຳເລັດໄປແລ້ວນັ້ນແມ່ນຈັດໄດ້ວ່າມີຜົນສຳເລັດ. ບົດຮຽນຕ່າງໆທີ່ຖອດຖອນໄດ້ຈາກບັນດາໂຄງການຕ່າງໆທີ່ຜ່ານມາລວມມີ: ຄວາມຈຳເປັນໃນການ (i) ວິເຄາະຄວາມຕ້ອງການດ້ານການທ່ອງທ່ຽວໃນບັນດາພື້ນທີ່ໂຄງການເພື່ອເປັນບ່ອນອີງໃນການຄັດເລືອກການລົງທຶນໃສ່ດ້ານໂຄງລ່າງພື້ນຖານ, (ii) ຍົກລະດັບການປະສານງານແລະການເຮັດວຽກຮ່ວມກັນ ລະຫວ່າງ ຂະແໜງການຕ່າງໆໂດຍທຶນຊ່ວຍເຫລືອໃນບ້ວງອື່ນຂອງເອດີບີ, (iii) ສ້າງຄວາມອາດສາມາດດ້ານການຄຸ້ມຄອງບໍລິຫານໂຄງການ, ການດຳເນີນງານໂຄງການ ແລະ ການບຳລຸງຮັກສາ, ແລະ (iv) ສົ່ງເສີມການພັດທະນາວິສາຫະກິດເອກະຊົນທີ່ກ່ຽວຂ້ອງກັບການທ່ອງທ່ຽວ ປະກອບກັບການສ້າງພື້ນຖານໂຄງລ່າງເພື່ອຂະຫຍາຍໂອກາດສ້າງລາຍຮັບໃຫ້ແກ່ປະຊາຊົນທ້ອງຖິ່ນ. ໂດຍນຳໃຊ້ບົດຮຽນທີ່ຖອດຖອນໄດ້ເຫລົ່ານີ້, ໂຄງການດັ່ງກ່າວນີ້ຈຶ່ງໄດ້ຄັດເລືອກເອົາບັນດາໂຄງການປົກຍ່ອຍດ້ານພື້ນຖານໂຄງລ່າງທີ່ກ່ຽວຂ້ອງ ໂດຍອີງຕາມການວິເຄາະຕະຫຼາດທີ່ໜັກແໜ້ນປະກອບກັບການຊ່ວຍເຫຼືອ ແລະ ທຶນສົມທົບອື່ນໆຈາກເອດີບີ ແລະ ຈາກບັນດາຄູ່ຮ່ວມພັດທະນາ ເພື່ອພັດທະນາເຂດເທດສະບານ, ການສະໜອງນ້ຳສະອາດ ແລະ ສຸຂະາພິບານ, ການຝຶກອົບຮົມວິຊາຊີບ, ແລະ ການທ່ອງທ່ຽວ. ການສ້າງຄວາມອາດສາມາດໃຫ້ບັນດາໜ່ວຍງານຕ່າງໆທີ່ຮັບຜິດຊອບໃນການດຳເນີນງານ ແລະ ການບຳລຸງຮັກສາໂຄງລ່າງພື້ນຖານ, ປະກອບກັບການຊ່ວຍເຫຼືອວິສາຫະກິດຂະໜາດນ້ອຍທີ່ແມ່ຍິງ ແລະ ຊົນເຜົ່າເປັນເຈົ້າຂອງກິດຈະການນັ້ນຈະເປັນການສົ່ງເສີມຄວາມຍືນຍົງໃຫ້ແກ່ຜົນໄດ້ຮັບຈາກໂຄງການ ແລະ ຈະເປັນການຮັບປະກັນວ່າ ຜົນປະໂຫຍດທີ່ເກີດຂຶ້ນນັ້ນ ເຂົ້າເຖິງກຸ່ມທີ່ດ້ອຍໂອກາດ. ໂຄງການໄດ້ຄັດເລືອກເອົາການຊ່ວຍເຫຼືອດ້ານໂຄງລ່າງພື້ນຖານ ແລະ ດ້ານການສ້າງຄວາມສາມາດຢ່າງຮອບຄອບ ເຊິ່ງຈະເຊື່ອມຕໍ່ກຸ່ມຄົນທີ່ມີລາຍຮັບຕ່ຳເຂົ້າກັບການໃຫ້ບໍລິການພື້ນຖານ ແລະ ຕະຫຼາດ ແລະຈະຊ່ວຍພວກເຂົາໃຫ້ເຂົ້າເຖິງວຽກເຮັດງານທຳທີ່ຕິດພັນກັບການທ່ອງທ່ຽວ, ການສຶກສາ, ການຮັກສາສຸຂະພາບ, ແລະ ໂອກາດດ້ານອື່ນໆ. ລັກສະນະພິເສດ. ໂຄງການນີ້ຈະ (i) ສ້າງຄວາມເຂັ້ມແຂງດ້ານການປະສານສົມທົບ ລະຫວ່າງ ລັດຖະບານກັບຂະແໜງການເອກະຊົນ, ການຈັດຕັ້ງມະຫາຊົນ ແລະ ຊຸມຊົນທ້ອງຖິ່ນຕ່າງໆເພື່ອປັບປຸງການຄຸ້ມຄອງບໍລິຫານສະຖານທີ່ທ່ອງທ່ຽວ; (ii) ທົດລອງດຳເນີນການໃຫ້ເຫັນວ່າຄ່າທຳນຽມຕ່າງໆທີ່ເກັບຈາກນັກທ່ອງທ່ຽວສາມາດນຳໄປສະໜອງເປັນງົບປະມານໃຫ້ແກ່ການບຳລຸງຮັກສາສະຖານທີ່ສາທາລະນະເຊັ່ນ: ສະຖານທີ່ທາງນໍລະດົກ, ຖະໜົນຫົນທາງ ແລະ ການປັບປູງສະພາບແວດລ້ອມເພື່ອສະດວກໃຫ້ແກ່ທູລະກິດດ້ານບໍລິການຕ່າງໆ; (iii) ສ້າງຄວາມເຂັ້ມແຂງໃຫ້ການຮ່ວມມືໃນການແລກປ່ຽນບົດຮຽນ ແລະ ຄວາມຮູ້ລະຫວ່າງ ບັນດາປະເທດສະມາຊິກອະນຸ ພາກພື້ນແມ່ນ້ຳຂອງ ແລະ ອາຊຽນດ້ວຍກັນ; ແລະ (iv) ສ້າງໂອກາດໃນການຍົກລະດັບຂະແໜງການບໍລິການເພື່ອເລັ່ງການຂະຫຍາຍບັນດາແລວທາງອະນຸພາກພື້ນແມ່ນ້ຳຂອງ ໃຫ້ເປັນແລວທາງເສດຖະກິດໂດຍການເຊື່ອມໂຍງກັບບັນດາແຫຼ່ງທີ່ທ່ອງທ່ຽວສຳຄັນຮອງລົງມາທີ່ນັບມື້ນັບເພີ່ມຫລາຍຂຶ້ນ.

## ■ ຜົນໄດ້ຮັບຈາກການພັດທະນາ

ເພີ້ມການຈ້າງງານດ້ານການທ່ອງທ່ຽວສຳລັບ ຊາຍ ແລະ ຍິງ ທີ່ອາໃສຢູ່ໃນເຂດທີ່ຍັງບໍ່ທັນໄດ້ພັດທະນາຕາມເຂດແລວທາງເສດຖະກິດຕອນກາງອະນຸພາກພື້ນແມ່ນ້ຳຂອງ.

## ຜົນໄດ້ຮັບຂອງໂຄງການ

| ຜົນໄດ້ຮັບລະອຽດ | ຄວາມຄືບໜ້າທີ່ນຳໄປສູ່ຜົນໄດ້ຮັບ |
|---|---|
| ເພີ້ມລາຍຮັບຈາກການທ່ອງທ່ຽວໃນແຂວງຈຳປາສັກ, ຄຳມ່ວນ, ຫຼວງພະ ບາງ ແລະ ອຸດົມໄຊ. | ທຶນກູ້ຢືມ ໄດ້ຮັບການປະກາດນຳໃຊ້ຢ່າງເປັນທາງການ ໃນວັນທີ 14 ມັງກອນ 2015. ໜ່ວຍງານປະສານງານໂຄງການ (PCU) ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ໄດ້ຮັບການປະກອບພະນັກງານປະຈຳການຢ່າງຄົບຊຸດ ຊຶ່ງເປັນພະນັກງານ ຈາກກົມກອງຂອງຄູ່ຮ່ວມມືທີ່ເປັນພາກລັດ. |

## ຜົນໄດ້ຮັບ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ

| ລາຍລະອຽດຜົນໄດ້ຂອງໂຄງການ | ສະຖານະພາບຂອງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ (ຜົນການຈັດຕັ້ງປະຕິບັດ, ກິດຈະກຳ ແລະ ບັນຫາຕ່າງໆ) |
|---|---|
| ພື້ນຖານໂຄງລ່າງເພື່ອເຂົ້າເຖິງປາຍທາງສຸດທ້າຍຂອງການທ່ອງທ່ຽວໄດ້ຮັບການປັບປຸງ.ແວດລ້ອມທີ່ສະດວກຕໍ່ການບໍລິການຕ່າງໆໃນບັນດາສູນກາງທ່ອງທ່ຽວຂ້າມຊາຍແດນໄດ້ຮັບການປັບປຸງ. ຄວາມສາມາດຂັ້ນສະຖາບັນເພື່ອສົ່ງເສີມການຂະຫຍາຍຕົວດ້ານການທ່ອງທ່ຽວແບບມີຜົນປະໂຫຍດຮ່ວມກັນຢ່າງທົ່ວເຖິງໄດ້ ຮັບການຍົກລະດັບ. ການຈັດຕັ້ງປະຕິບັດໂຄງການ ແລະ ເກັບກຳບົດຮຽນ ແລະ ຄວາມຮູ້ຕ່າງໆໄດ້ຢ່າງມີປະສິດທິພາບ. | ທີ່ປຶກສາດ້ານການເສີມສ້າງຄວາມສາມາດ ແລະ ການຄຸ້ມຄອງສະຖານທີ່ທ່ອງທ່ຽວຈຳນວນ 5 ທ່ານ ໄດ້ຮັບການຄັດເລືອກແລ້ວ ເພື່ອສະໜອງຄວາມຊ່ວຍເຫຼືອກ່ຽວກັບການຈັດຕັ້ງປະຕິບັດໂຄງການໃຫ້ແກ່ອົງການຄຸ້ມຄອງໂຄງການ. ການຄັດເລືອກທີ່ປຶກສາ (ບໍລິສັດ) ດ້ານວິສະວະກຳກໍ່ສ້າງແລະການຄຸ້ມຄອງໂຄງການກຳລັງຢູ່ໃນຂັ້ນຕອນການດຳເນີນງານ. ທີມງານໂຄງການກຳລັງຢູ່ໃນຂັ້ນຕອນການກະກຽມແຜນກິດຈະກຳ ແລະງົບປະມານປະຈຳປີສະບັບທຳອິດຂອງໂຄງການ ໂດຍຜ່ານການປຶກສາຫາລືກັບໝົດທຸກພາກສ່ວນກ່ຽວຂ້ອງກັບໂຄງການ. |
| **ສະຖານະພາບຂອງຈຸດປະສົງການພັດທະນາ** | **ການປ່ຽນດ້ານເນື້ອໃນໂຄງການ** |
| – | – |
| **ສິ່ງທີ່ປ່ຽນແປງໃນພາກປະຕິບັດ** | |
| – | |

## ໂອກາດທາງທຸລະກິດ

| | |
|---|---|
| ວັນທີການບັນທຶກຄັ້ງທຳອິດ | – |

**ການບໍລິການຂອງທີ່ປຶກສາ**

–

**ການຈັດຊື້-ຈັດຈ້າງ**

–

**ປະກາດການຈັດຊື້ ແລະ ຈັດຈ້າງທີ່ປຶກສາ**

http://www.adb.org/projects/46293-003/business-opportunities

## ຕາຕະລາງເວລາ

| | |
|---|---|
| ການອະນຸມັດແນວຄວາມຄິດ | 30 ພະຈິກ 13 |
| ການພິສູດຂໍ້ເທັດຈິງ | 01 ທັນວາ 2013 to 15 ທັນວາ 2013 |
| ກອງປະຊຸມປະເມີນການຄຸ້ມຄອງ | 13 ພຶດສະພາ 14 |
| ອະນຸມັດ | 8 ກັນຍາ 14 |

## ຂັ້ນຕອນການປະຕິບັດ

| ເລກທີອະນຸມັດ | ອະນຸມັດ | ລາຍເຊັນ | ການສ້າງຜົນໄດ້ຮັບ | ການປິດ | | |
|---|---|---|---|---|---|---|
| | | | | ເບື້ອງຕົ້ນ | ປັບປຸງ | ຕົວຈິງ |
| ເງິນກູ້ຢືມ 3156 | 8 ກັນຍາ 14 | 27 ຕຸລາ 14 | 14 ມັງກອນ 15 | 31 ທັນວາ 19 | – | – |

## ການນໍາໃຊ້

| ວັນທີ | ເລກທີອະນຸມັດ | ເອດີບີ (ພັນໂດລາ) | ແຫລ່ງທຶນອື່ນໆ (ພັນໂດລາ) | ເປີເຊັນສຸດທິ |
|---|---|---|---|---|
| ສັນຍາໃຊ້ທຶນ ສະສົມ | | | | |
| 18 ມິຖຸນາ 2015 | ເງິນກູ້ຢືມ 3156 | 679 | 0 | 2,00% |
| ການເບີກຈ່າຍ ສະສົມ | | | | |
| 18 ມິຖຸນາ 15 | ເງິນກູ້ຢືມ 3156 | 1.000 | 0 | 3,00% |

## ສະຖານະພາບຂອງຂໍ້ສັນຍາ

ສັນຍາແມ່ນໄດ້ຈັດເປັນໝວດຕ່າງໆດັ່ງຕໍ່ໄປນີ້ ບັນຊີການເງິນໂຄງການທີ່ໄດ້ຮັບການກວດສອບ, ການປົກປ້ອງ, ດ້ານສັງຄົມ, ຂະແໜງການ, ດ້ານການເງິນ, ເສດຖະກິດ, ແລະ ອື່ນໆ. ການປະຕິບັດຂໍ້ສັນຍາແມ່ນໄດ້ຮັບການປະເມີນຈາກຂໍ້ສັນຍາໃນໝວດຕ່າງໆ ໂດຍການນໍາໃຊ້ມາດ ຖານດັ່ງລຸ່ມນີ້: (i) ມີຄວາມເພິ່ງພໍໃຈຂໍ້ສັນຍາທັງໝົດໃນໝວດດັ່ງກ່າວໄດ້ຮັບການປະຕິບັດ, ເງື່ອນໄຂສູງສຸດອັນໜຶ່ງຂອງຂໍ້ສັນຍາໄດ້ຮັບການອະນຸຍາດໃຫ້ຖືກຍົກເວັ້ນ, (ii) ພໍໃຈບາງສ່ວນເງື່ອນໄຂສູງສຸດຂອງສອງຂໍ້ສັນຍາໃນໝວດດັ່ງກ່າວນັ້ນບໍ່ໄດ້ຮັບການປະຕິບັດ, (iii) ບໍ່ມີຄວາມພໍໃຈສັນຍາສາມຂໍ້ ຫລື ຫລາຍກວ່ານັ້ນຢູ່ໃນໝວດດັ່ງກ່າວບໍ່ໄດ້ຮັບການປະຕິບັດ. ອີງຕາມນະໂຍບາຍສື່ສານມອນປີ 2011, ການຈັດອັນດັບການ ປະຕິບັດສັນຍາສໍາລັບເອກະສານລາຍງານທາງການເງິນໂຄງການ ຈະໄດ້ປະຕິບັດໃນບັນດາໂຄງການທີ່ໄດ້ຮັບການເຈລະຈາໂຄງການພາຍຫລັງ ວັນທີ່ 2 ເມສາ 2012.

| ເລກທີອະນຸມັດ | ໝວດ | | | | | | |
|---|---|---|---|---|---|---|---|
| | ຂະແໜງການ | ສັງຄົມ | ການເງິນ | ເສດຖະກິດ | ອື່ນໆ | ການປົກປ້ອງ | ເອກະສານລາຍງານທາງການເງິນໂຄງການ |
| ເງິນກູ້ຢືມ 3156 | – | – | – | – | – | – | – |

## ລາຍລະອຽດບ່ອນສອບຖາມ ແລະ ການປັບປຸງຂໍ້ມູນ

| | |
|---|---|
| ພະນັກງານຮັບຜິດຊອບຂອງເອດີບີ | ທ່ານ ສະຕີເວັນ ສຈິປານີ (sschipani@adb.org) |
| ກົມຮັບຜິດຊອບຂອງເອດີບີ | ກົມອາຊີຕາເວັນອອກສ່ຽງໃຕ້ |
| ພະແນກຮັບຜິດຊອບຂອງເອດີບີ | ສໍານັກງານເອດີບີປະຈໍາປະເທດລາວ |
| ອົງການຈັດຕັ້ງປະຕິບັດ | – |

## ເວັບໄຊ້ ກ່ຽວກັບ ເອກະສານທີ່ກ່ຽວຂ້ອງ

| | |
|---|---|
| ເວັບໄຊ້ໂຄງການ | http://www.adb.org/projects/46293-003/main |
| ລາຍການເອກະສານໂຄງການ | http://www.adb.org/projects/46293-003/documents |